**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ເຈົ້າແຂວງ

ເລກທີ 272 /ຈຂ

ຫຼວງນ້ຳທາ, ວັນທີ 11 ມີນາ 2025

# ຂໍ້ຕົກລົງ

## ວ່າດ້ວຍກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍະກຳ ແຂວງຫຼວງນ້ຳທາ (ສະບັບປັບປຸງ)

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 06/ສພຊ, ລົງວັນທີ 12 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍກິລາ-ກາຍະກຳ (ສະບັບປັບປຸງ) ສະບັບເລກທີ 74/ສພຊ, ລົງວັນທີ 25 ພະຈິກ 2019;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 295/ລບ, ລົງວັນທີ 29 ສິງຫາ 2022;
- ອີງຕາມ ໜັງສືສະເໜີ ຂອງພະແນກສຶກສາທິການ ແລະ ກິລາແຂວງ ສະບັບເລກທີ 398/ສກຂ, ລົງວັນທີ 21 ກຸມພາ 2025.

**ເຈົ້າແຂວງຫຼວງນ້ຳທາ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຈັດຕັ້ງປະຕິບັດ, ການເຄື່ອນໄຫວ, ການຄຸ້ມຄອງ, ການນຳໃຊ້ ແລະ ການກວດກາ, ເພື່ອສະສົມທຶນຮອນເຂົ້າໃນການພັດທະນາວຽກງານກິລາ-ກາຍະກຳພາຍໃນແຂວງ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາເສດຖະກິດສັງຄົມຂອງທ້ອງຖິ່ນ ເພື່ອຮອງຮັບການພັດທະນາວຽກງານກິລາ-ກາຍະກຳໃຫ້ມີຄຸນນະພາບດີຂຶ້ນ.

### ມາດຕາ 2 ກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍະກຳແຂວງ

ກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍະກຳ ແມ່ນກອງທຶນຂອງລັດ ແລະ ສັງຄົມທີ່ສ້າງຕັ້ງຂຶ້ນເພື່ອຮັບໃຊ້ເຂົ້າໃນການພັດທະນາວຽກງານກິລາ-ກາຍະກຳຂອງແຂວງ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ກອງທຶນສົ່ງເສີມ:** ໝາຍເຖິງ ການທ້ອນໂຮມເງິນທຶນທີ່ໄດ້ມາຈາກຫຼາຍແຫຼ່ງລາຍຮັບ ເພື່ອຮັບໃຊ້ການພັດທະນາວຽກງານກິລາ-ກາຍະກຳ.
2. **ການພັດທະນາ:** ໝາຍເຖິງ ການພັດທະນາດ້ານການບໍລິຫານ, ເຕັກນິກ, ທັກສະ ແລະ ຄວາມຊຳນານຂອງນັກກິລາ, ຄູຝຶກ ແລະ ກຳມະການຕັດສິນໃຫ້ດີຂຶ້ນ ກ້າວໄປສູ່ລະດັບແຂວງ, ລະດັບຊາດ ແລະ ສາກົນ.
3. **ກິລາ-ກາຍະກຳ:** ໝາຍເຖິງ ການເຄື່ອນໄຫວກິດຈະກຳຕ່າງໆ ໃນການຝຶກແອບ, ການແຂ່ງຂັນ, ການສະແດງ, ການແລກປ່ຽນແບບບຸກຄົນ, ລວມໝູ່ທີ່ມີສິລະປະ, ລວດລາຍສະເພາະ ເພື່ອເຮັດໃຫ້ຮ່າງກາຍແຂງແຮງ, ສວຍງາມ, ຈິດໃຈເບີກບານ, ສະໝອງໄດ້ຮັບການພັດທະນາ, ສ້າງຄວາມຊຳນານ, ປະສົບການທາງດ້ານເຕັກນິກ, ຍຸດທະວິທີເປັນທີ່ນິຍົມຊົມຊອບຂອງມວນຊົນກ້າວໄປເຖິງການສະແດງ, ການແຂ່ງຂັນເພື່ອຄວາມເປັນເລີດນຳເອົາກຽດສັກສີ ແລະ ຊື່ສຽງມາສູ່ຂະແໜງການ, ທ້ອງຖິ່ນ ແລະ ປະເທດຊາດ.
4. **ກິລາລະດັບສູງ:** ໝາຍເຖິງ ກິດຈະກຳການແຂ່ງຂັນກິລາ ທີ່ແນໃສ່ບັນລຸຜົນທາງດ້ານມາດຕະຖານ, ເຕັກນິກ, ຍຸດທະວິທີ, ວິທະຍາສາດ, ສະຖິຕິ, ຄຸນນະພາບໃນລະດັບຊາດ, ອະນຸພາກພື້ນ, ພາກພື້ນ ແລະ ສາກົນ.
5. **ກິລາມວນຊົນ:** ໝາຍເຖິງ ກິດຈະກຳການຝຶກແອບ, ການສະແດງ, ການຫຼິ້ນ, ການແຂ່ງຂັນກິລາ-ກາຍະກຳຂອງພົນລະເມືອງທົ່ວໄປໂດຍບໍ່ຈຳແນກເຊື້ອຊາດ, ອາຍຸ, ເພດໄວ, ສຸຂະພາບ, ຄວາມພິການ, ຖານະທາງດ້ານເສດຖະກິດ-ສັງຄົມຢູ່ໃນຮາກຖານ, ຂະແໜງການ ແລະ ທ້ອງຖິ່ນ ແນໃສ່ສົ່ງເສີມສຸຂະພາບ, ຄວາມສາມັກຄີ ແລະ ຄວາມມ່ວນຊື່ນເປັນຕົ້ນຕໍໂດຍປະຕິບັດຕາມກົດລະບຽບ, ກະຕິກາທີ່ແນ່ນອນ.

**ມາດຕາ 4 (ສ້າງໃໝ່) ຫຼັກການກ່ຽວກັບ ກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍະກຳ**

ການຈັດຕັ້ງປະຕິບັດ, ການເຄື່ອນໄຫວຂອງກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍະກຳໃຫ້ປະຕິບັດຕາມຫຼັກການດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງໃນແຕ່ລະໄລຍະ;
2. ມີລັກສະນະຊາດ, ມະຫາຊົນ, ວິທະຍາສາດ ແລະ ທັນສະໄໝ;
3. ຕິດພັນກັບການສຶກສາ, ວັດທະນະທຳ, ການພັດທະນາຄົນລຸ້ນໜຸ່ມ, ສ້າງນັກກິລາໃຫ້ມີກຳລັງກາຍແຂງແຮງ, ມີໄຫວພິບ, ມີລະບຽບວິໄນຢ່າງເຂັ້ມງວດ, ມີນ້ຳໃຈຮັກຊາດ, ມີຄວາມອົດທົນ, ເສຍສະຫຼະ, ມີຈິດໃຈເຂັ້ມແຂງ, ມີຄວາມດຸໝັ່ນ, ຫ່າງໄກຈາກສິ່ງເສບຕິດ ແລະ ສິ່ງຫຍໍ້ທໍ້ອື່ນໆ;
4. ຮັບປະກັນທິດສະດີ ຕິດພັນກັບພຶດຕິກຳຕົວຈິງ, ການຝຶກແອບ, ຝຶກຊ້ອມ ແລະ ການແຂ່ງຂັນໃນລະດັບຕ່າງໆ;
5. ມີຄວາມສະເໝີພາບ, ເປັນເອກະພາບ, ຖືກຕ້ອງ, ໂປ່ງໃສ, ເປີດເຜີຍ, ຍຸຕິທຳ ແລະ ສາມາດກວດສອບໄດ້.

**ມາດຕາ 5 ຂອບເຂດການນຳໃຊ້ຂໍ້ຕົກລົງ**

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບອົງການຈັດຕັ້ງຂອງພັກ-ລັດ, ອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ບຸກຄົນ, ນິຕິບຸກຄົນ ແລະ ລັດວິສາຫະກິດ ສະເພາະແຕ່ແຂວງຫຼວງນ້ຳທາ.

## ໝວດທີ 2
## ການສົ່ງເສີມ ແລະ ພັດທະນານັກກິລາ, ບຸກຄະລາກອນກິລາ-ກາຍະກຳ ແຂວງຫຼວງນ້ຳທາ

**ມາດຕາ 6 ການສົ່ງເສີມກິລາ-ກາຍະກຳ**

1. ສົ່ງເສີມມວນຊົນທຸກເພດ, ທຸກໄວ, ປະຊາຊົນບັນດາເຜົ່າເຂົ້າຮ່ວມການຫັດກາຍະບໍລິຫານ, ການອອກກຳລັງກາຍ ແລະ ການຫຼິ້ນກິລາ-ກາຍະກຳ ເພື່ອໃຫ້ມີສຸຂະພາບແຂງແຮງ;
2. ສົ່ງເສີມ ແລະ ຊຸກຍູ້ພະນັກງານໃນສຳນັກງານ, ອົງການ, ບໍລິສັດ, ໂຮງຈັກ-ໂຮງງານ ແລະ ສະຖານທີ່ປະກອບການໃຫ້ມີການເຄື່ອນໄຫວປະເພດກິລາ-ກາຍະກຳໃດໜຶ່ງຕາມເງື່ອນໄຂ ແລະ ຄວາມສາມາດຕົວຈິງ;
3. ສົ່ງເສີມ ການເຄື່ອນໄຫວກິລາ-ກາຍະກຳ ຂອງສະໂມສອນກິລາ ໃນລະດັບບ້ານ, ເມືອງ ແລະ ແຂວງ;
4. ສົ່ງເສີມຄົນພິການໃຫ້ ຫັດກາຍະບໍລິຫານ, ອອກກຳລັງກາຍ ແລະ ຫຼິ້ນກິລາ.

**ມາດຕາ 7 ການພັດທະນານັກກິລາ, ບຸກຄະລາກອນກິລາ-ກາຍະກຳ**

1. ການພັດທະນານັກກິລາແມ່ນ ການຍົກລະດັບຄວາມຮູ້, ຄວາມສາມາດ, ເຕັກນິກ, ການຝຶກແອບ, ຝຶກຊ້ອມ, ທົດສອບໃນລະດັບລຸ້ນອາຍຸຕ່າງໆ ລວມທັງນັກກິລາມວນຊົນເພື່ອໃຫ້ມີຄວາມຊຳນິ ຊຳນານ, ມີສຸຂະພາບແຂງແຮງກະກຽມເຂົ້າຮ່ວມການແຂ່ງຂັນກິລາໃນລະດັບຕ່າງໆ ໃຫ້ມີປະສິດທິພາບ;
2. ການພັດທະນາບຸກຄະລາກອນກິລາ-ກາຍະກຳ ແມ່ນການຝຶກຊ້ອມ, ການຍົກລະດັບຄວາມຮູ້ທາງດ້ານທິດສະດີ ແລະ ພາກປະຕິບັດຕົວຈິງກ່ຽວກັບວິຊາການທີ່ກ່ຽວຂ້ອງ ໃຫ້ແກ່ບຸກຄະລາກອນເພື່ອຮັບໃຊ້ເຂົ້າໃນວຽກງານກິລາ-ກາຍະກຳໃຫ້ມີປະສິດທິພາບ;
3. ສົ່ງເສີມການຈັດຕັ້ງສະໂມສອນກິລາ-ກາຍະກຳປະເພດຕ່າງໆຂອງບຸກຄົນ, ນິຕິບຸກຄົນໃຫ້ມີການຂະຫຍາຍຕົວ.

## ໝວດທີ 3
## ແຫຼ່ງລາຍຮັບ, ການນຳໃຊ້ ແລະ ການຄຸ້ມຄອງ

**ມາດຕາ 8 (ປັບປຸງ) ແຫຼ່ງລາຍຮັບຂອງກອງທຶນ ສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍະກຳ**

ແຫຼ່ງລາຍຮັບເຂົ້າໃນກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍະກຳໄດ້ມາຈາກ:

1. ລາຍຮັບຈາກເງິນເກີນແຜນຂອງແຂວງ 01% ຕໍ່ປີ (ຮ່ວງທີ່ແຂວງສາມາດນຳໃຊ້ໄດ້);
2. ການປະກອບສ່ວນ (ພັນທະ) ຂອງພະນັກງານ-ລັດຖະກອນ, ພະນັກງານລັດວິສາຫະກິດ ຜູ້ທີ່ມີເງິນເດືອນທົ່ວແຂວງ ຜູ້ລະ 30,000 ກີບຕໍ່ຄົນຕໍ່ປີ (ສາມສິບພັນກີບຕໍ່ຄົນຕໍ່ປີ), ສຳລັບທະຫານ, ຕຳຫຼວດ ຈະມີຂໍ້ກຳນົດຕ່າງຫາກ;
3. ເກັບຄ່າບໍລິການການອອກໃບອະນຸຍາດສ້າງຕັ້ງສະໂມສອນ, ສະໜາມກິລາປະເພດຕ່າງໆ ຂອງລັດ ແລະ ເອກະຊົນ;
4. ຄ່າບໍລິການສະໝັກເຂົ້າແຂ່ງຂັນ, ການຂາຍປີ້ເຂົ້າຊົມການແຂ່ງຂັນ, ການສະແດງ, ຄ່າບໍລິການເດີ່ນກິລາ, ເພື່ອການກຸສົນ ແລະ ລາຍຮັບຈາກກິດຈະກຳອື່ນໆທີ່ຖືກຕ້ອງຕາມ ກົດໝາຍ-ລະບຽບການ;
5. ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ, ຫົວໜ່ວຍທຸລະກິດ, ອົງການຈັດຕັ້ງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ.

**ມາດຕາ 9 ການນຳໃຊ້ເງິນກອງທຶນ**

1. ນຳໃຊ້ເຂົ້າໃນກິດຈະກຳການແຂ່ງຂັນກິລາ ເພື່ອສະເຫຼີມສະຫຼອງວັນຊາດທີ 2 ທັນວາ, ວັນກິລາ-ກາຍະກຳກິລາແຫ່ງຊາດ, ການຄັດເລືອກ, ການຝຶກແອບ, ຝຶກຊ້ອມ, ການແຂ່ງຂັນ ກິລາໃນລະດັບເມືອງ, ແຂວງ, ລະດັບຊາດ, ອະນຸພາກພື້ນ, ພາກພື້ນ ແລະ ສາກົນ;

2. ນຳໃຊ້ເປັນຂອງຂວັນລາງວັນ ໃຫ້ແກ່ຄູຝຶກ, ຜູ້ຊ່ວຍຄູຝຶກ ແລະ ນັກກິລາທີ່ໄດ້ຮັບຫຼຽນ ຈາກການແຂ່ງຂັນໃນລະດັບຕ່າງໆ;
3. ນຳໃຊ້ເຂົ້າໃນການປະຕິບັດນະໂຍບາຍຕໍ່ຄູຝຶກ ແລະ ນັກກິລາທີ່ໄດ້ຮັບບາດເຈັບ ຫຼື ເສຍຊີວິດ ຈາກການຝຶກແອບ ແລະ ແຂ່ງຂັນກິລາ;
4. ນຳໃຊ້ເຂົ້າໃນວຽກງານບໍລິຫານຕ່າງໆ ເຊັ່ນ: ການຈັດກອງປະຊຸມ ສາມັນ ຫຼື ວິສາມັນ ຂອງຄະນະຮັບຜິດຊອບກອງທຶນ.

**ມາດຕາ 10 ການຄຸ້ມຄອງ ເງິນກອງທຶນ**

ການຄຸ້ມຄອງ ເງິນກອງທຶນປະຕິບັດຕາມຫຼັກການດັ່ງນີ້:

1. ການຄຸ້ມຄອງເງິນກອງທຶນ ຕ້ອງສອດຄ່ອງກັບກົດໝາຍ ງົບປະມານແຫ່ງລັດ;
2. ການນຳໃຊ້ເງິນກອງທຶນຕ້ອງໃຫ້ຖືກຕາມເປົ້າໝາຍ, ປະຢັດ ແລະ ມີປະສິດທິຜົນ;
3. ການໃຊ້ຈ່າຍເງິນກອງທຶນແຕ່ລະຄັ້ງ ຕ້ອງໄດ້ຮັບການອະນຸມັດຈາກທ່ານປະທານ ຫຼື ຮອງປະທານເທົ່ານັ້ນ.

**ມາດຕາ 11 (ປັບປຸງ) ການມອບເງິນເຂົ້າກອງທຶນ**

- ການມອບເງິນປະກອບສ່ວນເຂົ້າກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍະກຳແຂວງ ທຸກພາກສ່ວນຈະຕ້ອງໄດ້ນຳເງິນໄປມອບເຂົ້າບັນຊີຢູ່ຄັງເງິນແຫ່ງຊາດປະຈຳແຂວງ ເລກບັນຊີ 47103000.00.20350/51, ທະນາຄານການຄ້າຕ່າງປະເທດສາຂາຫຼວງນ້ຳທາ ເລກບັນຊີ 070110000319060001 ຫຼື ທະນາຄານພັດທະນາລາວສາຂາຫຼວງນ້ຳທາ ເລກບັນຊີ 0300300100000002;
- ການປະກອບສ່ວນເງິນເຂົ້າກອງທຶນແມ່ນປະຕິບັດຕາມ ມາດຕາ 7 ຂໍ້ 2 ໂດຍແມ່ນກົມກອງທີ່ກ່ຽວຂ້ອງເປັນຜູ້ຈັດເກັບ ແລະ ທ້ອນໂຮມ ແລ້ວມອບໂອນເຂົ້າບັນຊີກອງທຶນກິລາ-ກາຍະກຳຂອງແຂວງ (ບໍ່ໃຫ້ກາຍ) ເດືອນມິຖຸນາ ຂອງທຸກໆປີ (ຂັ້ນແຂວງ);
- ສຳລັບຂັ້ນເມືອງ ແມ່ນມອບໃຫ້ຫ້ອງການ, ກົມກອງທີ່ກ່ຽວຂ້ອງເປັນຜູ້ທ້ອນໂຮມ ແລ້ວມອບໃຫ້ຄະນະຮັບຜິດຊອບຂັ້ນເມືອງ (ຫ້ອງການສຶກສາທິການ ແລະ ກິລາເມືອງ) ເປັນຜູ້ທ້ອນໂຮມ ແລ້ວຫັກອອກ 30% ໄວ້ເປັນເງິນກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍະກຳຂັ້ນເມືອງ ແລະ 70% ແມ່ນມອບໂອນເຂົ້າບັນຊີຂອງກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍະກຳຂັ້ນແຂວງ (ບໍ່ໃຫ້ກາຍ) ເດືອນມິຖຸນາ ຂອງທຸກໆປີ;
- ແຕ່ລະເມືອງແມ່ນຕ້ອງໄດ້ເປີດບັນຊີຂອງກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍະກຳປະຈຳເມືອງ (ມີຄຳແນະນຳສະເພາະ).

**ມາດຕາ 12 ການຄຸ້ມຄອງວັດຖຸຂອງກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍະກຳ**

ກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍະກຳ ທີ່ເປັນວັດຖຸ ແມ່ນຄຸ້ມຄອງຕາມລະບົບສາງ ເພື່ອຮັບປະກັນບໍ່ໃຫ້ມີການຕົກເຮ່ຍເສຍຫາຍ ແລະ ເບີກຈ່າຍໃຫ້ທັນຕາມສະພາບການໂດຍແມ່ນ ພະແນກສຶກສາທິການ ແລະ ກິລາແຂວງ ເປັນຜູ້ຄຸ້ມຄອງ.

## ໝວດທີ 4

## ຄະນະຮັບຜິດຊອບຄຸ້ມຄອງກອງທຶນ

**ມາດຕາ 13 (ປັບປຸງ) ຄະນະຮັບຜິດຊອບຄຸ້ມຄອງກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍະກຳ**

ຄະນະຮັບຜິດຊອບຄຸ້ມຄອງກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍະກຳປະກອບມີ 2 ຂັ້ນ ດັ່ງນີ້:

**ກ. ຂັ້ນແຂວງ ປະກອບມີ:**

1. ທ່ານ ຮອງເຈົ້າແຂວງ, ຜູ້ຊີ້ນຳວຽກງານຂົງເຂດວັດທະນະທຳ-ສັງຄົມ ເປັນປະທານ;

2. ທ່ານ ຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ ເປັນຮອງ;
3. ທ່ານ ຫົວໜ້າຫ້ອງວ່າການແຂວງ ເປັນຮອງ;
4. ທ່ານ ຮອງຫົວໜ້າພະແນກການເງິນແຂວງ ເປັນຄະນະ;
5. ທ່ານ ຮອງຫົວໜ້າກອງບັນຊາການທະຫານແຂວງ ເປັນຄະນະ;
6. ທ່ານ ຮອງຫົວໜ້າພະແນກສາທາລະນະສຸກແຂວງ ເປັນຄະນະ;
7. ທ່ານ ຮອງຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງແຂວງ ເປັນຄະນະ;
8. ທ່ານ ຮອງຫົວໜ້າກອງບັນຊາການ ປກສ ແຂວງ ເປັນຄະນະ;
9. ທ່ານ ຮອງຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງ ເປັນຄະນະ;
10. ທ່ານ ຮອງຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ ເປັນຄະນະ;
11. ທ່ານ ຮອງຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ເປັນຄະນະ;
12. ທ່ານ ບັນດາທ່ານ ຮອງເຈົ້າເມືອງຈາກ 5 ເມືອງ ເປັນຄະນະ;
13. ທ່ານ ຫົວໜ້າຄະນະຄຸ້ມຄອງເຂດເສດຖະກິດພິເສດແຂວງຫຼວງນໍ້າທາ ເປັນຄະນະ;
14. ທ່ານ ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ ຜູ້ຊີ້ນຳວຽກງານກິລາ ເປັນຄະນະ;
15. ທ່ານ ປະທານສະຫະພັນກິລາປະເພດຕ່າງໆຂອງແຂວງ ເປັນຄະນະ.

**ຂ. ຂັ້ນເມືອງ ປະກອບມີ:**

1. ທ່ານ ຮອງເຈົ້າເມືອງ ເປັນປະທານ;
2. ທ່ານ ຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ ເປັນຮອງ;
3. ທ່ານ ຫົວໜ້າຫ້ອງວ່າການເມືອງ ເປັນຮອງ;
4. ທ່ານ ຮອງຫົວໜ້າຫ້ອງການການເງິນເມືອງ ເປັນຄະນະ;
5. ທ່ານ ຮອງຫົວໜ້າກອງບັນຊາການທະຫານເມືອງ ເປັນຄະນະ;
6. ທ່ານ ຮອງຫົວໜ້າກອງບັນຊາການ ປກສ ເມືອງ ເປັນຄະນະ;
7. ທ່ານ ຮອງຫົວໜ້າຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ ເປັນຄະນະ;
8. ທ່ານ ຮອງຫົວໜ້າຫ້ອງການແຜນການ ແລະ ການລົງທຶນເມືອງ ເປັນຄະນະ;
9. ທ່ານ ຮອງຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ເປັນຄະນະ;
10. ທ່ານ ຮອງຫົວໜ້າຫ້ອງການແຮງງານ ແລະ ສະຫວັດດີການເມືອງ ເປັນຄະນະ;
11. ທ່ານ ຮອງຫົວໜ້າຫ້ອງການສາທາລະນະສຸກເມືອງ ເປັນຄະນະ.

**ມາດຕາ 14 ສິດ ແລະ ໜ້າທີ່ຂອງຄະນະຮັບຜິດຊອບຄຸ້ມຄອງ ກອງທຶນແຕ່ລະຂັ້ນ**

ຄະນະຮັບຜິດຊອບຄຸ້ມຄອງກອງທຶນແຕ່ລະຂັ້ນມີສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາຮັບຮອງແຜນພັດທະນາ, ແຜນການເຄື່ອນໄຫວ ແລະ ແຜນງົບປະມານປະຈຳປີ;
2. ພິຈາລະນາຮັບຮອງເອົາລະບຽບການຕ່າງໆ, ຈັດສັນທຶນເຂົ້າໃສ່ແຜນການ, ແຜນງານ ແລະ ໂຄງການຕ່າງໆ ເພື່ອນຳສະເໜີ ທ່ານປະທານ ຫຼື ຮອງປະທານອະນຸມັດ;
3. ຊີ້ນຳ, ນຳພາ, ຊຸກຍູ້, ຕິດຕາມ ຄຸ້ມຄອງ ແລະ ນຳໃຊ້ເງິນກອງທຶນ ໃຫ້ຖືກຕ້ອງຕາມເປົ້າໝາຍ, ມີປະສິດທິພາບ ແລະ ປະສິດທິຜົນ;
4. ນຳເອົາຂໍ້ຕົກລົງສະບັບນີ້ໄປຜັນຂະຫຍາຍໂຄສະນາເຜີຍແຜ່ໃຫ້ສັງຄົມຮັບຮູ້ຢ່າງກວ້າງຂວາງ ແລະ ເລັກເຊື້ອ ເພື່ອປຸກລະດົມການປະກອບສ່ວນເຂົ້າກອງທຶນ;

5. ຊີ້ນຳ ນຳພາເກັບກຳຈຳນວນພົນທີ່ປະກອບສ່ວນເຂົ້າກອງທຶນຂອງກອງເລຂາໃຫ້ລະອຽດ;
6. ອະນຸມັດສັ່ງຈ່າຍເງິນກອງທຶນຕາມລະບຽບການພ້ອມທັງຕິດຕາມລາຍຮັບ-ລາຍຈ່າຍໃຫ້ລະອຽດຊັດເຈນ ແລະ ຖືກຕ້ອງ;
7. ກຳນົດຮູບແບບໃນການຮັບ, ການປະກອບສ່ວນເຂົ້າກອງທຶນ ຈາກບຸກຄົນ, ນິຕິບຸກຄົນ ພາຍໃນ ແລະ ຕ່າງປະເທດ ເພື່ອບໍ່ໃຫ້ມີຊ່ອງຫວ່າງໃຫ້ບຸກຄົນສວຍໂອກາດ;
8. ຈັດແບ່ງຄວາມຮັບຜິດຊອບໃຫ້ໝູ່ຄະນະຢ່າງລະອຽດຈະແຈ້ງ;
9. ມີການສະຫຼຸບ-ລາຍງານເປັນປົກກະຕິ 6 ເດືອນ, 1 ປີ ສົ່ງໃຫ້ຄະນະຮັບຜິດຊອບກອງທຶນທຸກຂັ້ນຮັບຊາບ.

**ມາດຕາ 15 (ປັບປຸງ) ກອງເລຂາຄະນະຄຸ້ມຄອງ ກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍະກຳຂັ້ນແຂວງ**

ກອງເລຂາຊ່ວຍວຽກຂອງຄະນະຄຸ້ມຄອງກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍະກຳຂັ້ນແຂວງ ປະກອບມີ:

1. ທ່ານ ຮອງຫົວໜ້າຫ້ອງວ່າການແຂວງ ເປັນປະທານ;
2. ທ່ານ ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ (ຜູ້ຊີ້ນຳວຽກງານກິລາ) ເປັນຮອງ;
3. ທ່ານ ຫົວໜ້າຂະແໜງ ບໍລິຫານ-ການເງິນ ຫ້ອງວ່າການແຂວງ ເປັນຄະນະ;
4. ທ່ານ ຫົວໜ້າຂະແໜງ ບໍລິຫານ-ການເງິນ ພະແນກສຶກສາທິການ ແລະ ກິລາແຂວງ ເປັນຄະນະ;
5. ທ່ານ ຫົວໜ້າຂະແໜງ, ກິລາ-ກາຍະກຳ ແລະ ສິລະປະສຶກສາ ພະແນກສຶກສາທິການ ແລະ ກິລາແຂວງ ເປັນຄະນະ;
6. ທ່ານ ວິຊາການ ຂະແໜງກິລາ-ກາຍະກຳ ແລະ ສິລະປະສຶກສາ ພະແນກສຶກສາທິການ ແລະ ກິລາແຂວງ ເປັນຄະນະ.

**ມາດຕາ 16 (ປັບປຸງ) ກອງເລຂາຄະນະ ກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍະກຳຂັ້ນເມືອງ**

ກອງເລຂາຊ່ວຍວຽກຂອງຄະນະຄຸ້ມຄອງກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍະກຳຂັ້ນເມືອງ ປະກອບມີ:

1. ທ່ານ ຮອງຫົວໜ້າຫ້ອງວ່າການເມືອງ ເປັນປະທານ;
2. ທ່ານ ຮອງຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ ເປັນຮອງ;
3. ທ່ານ ຮອງຫົວໜ້າໜ່ວຍງານການເງິນຫ້ອງວ່າການເມືອງ ເປັນຄະນະ;
4. ທ່ານ ຫົວໜ້າໜ່ວຍງານບໍລິຫານ-ການເງິນ ຫ້ອງການສຶກສາທິການ ແລະ ກິລາເມືອງ ເປັນຄະນະ;
5. ທ່ານ ຫົວໜ້າໜ່ວຍງານ ກິລາ-ກາຍະກຳ ແລະ ສິລະປະສຶກສາ ຫ້ອງການສຶກສາທິການ ແລະ ກິລາເມືອງ ເປັນຄະນະ;
6. ທ່ານ ວິຊາການ ໜ່ວຍງານກິລາ-ກາຍະກຳ ແລະ ສິລະປະສຶກສາ ຫ້ອງການສຶກສາທິການ ແລະ ກິລາເມືອງ ເປັນຄະນະ.

**ມາດຕາ 17 ສິດ ແລະ ໜ້າທີ່ກອງເລຂາກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍະກຳຂັ້ນແຂວງ**

ກອງເລຂາຊ່ວຍວຽກຂັ້ນແຂວງ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ເປັນເສນາທິການໃຫ້ແກ່ຫົວໜ້າຄະນະໃນການແຕ່ງຕັ້ງ, ຊັບຊ້ອນ, ຍົກຍ້າຍ, ປະຕິບັດນະໂຍບາຍ ແລະ ລົງວິໄນຕໍ່ນັກກິລາ, ບຸກຄະລາກອນກິລາ-ກາຍະກຳ;
2. ຈັດຕັ້ງປະຕິບັດ ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບການຄຸ້ມຄອງກອງທຶນ;
3. ຄົ້ນຄວ້າ, ວາງແຜນ ໂຄງການພັດທະນາວຽກງານກິລາ-ກາຍະກຳເພື່ອສະເໜີຕໍ່ຂັ້ນເທິງ ອະນຸມັດແລ້ວຈັດຕັ້ງປະຕິບັດ;

4. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້າສະເໜີສ້າງຕັ້ງ ແລະ ປັບປຸງ ຫຼື ຍົກເລີກ ຜູ້ປະກອບການທຸລະກິດດ້ານກິລາ;
5. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຄັດເລືອກ, ຝຶກຊ້ອມນັກກິລາ ພ້ອມທັງຈັດການແຂ່ງຂັນ ແລະ ເຂົ້າຮ່ວມການແຂ່ງຂັນກິລາໃນລະດັບຕ່າງໆ;
6. ຄຸ້ມຄອງ, ພັດທະນາ, ນຳໃຊ້ພື້ນຖານໂຄງລ່າງ, ພາຫະນະ, ວັດຖຸອຸປະກອນ, ງົບປະມານກິລາ-ກາຍະກຳໃຫ້ມີປະສິດທິຜົນ;
7. ປຸກລະດົມຂົນຂວາຍຊອກຫາແຫຼ່ງທຶນເຂົ້າກອງທຶນ;
8. ສະຫຼຸບລາຍຮັບ-ລາຍຈ່າຍ ເງິນກອງທຶນ, ລາຍງານການເຄື່ອນໄຫວວຽກງານກອງທຶນເປັນປົກກະຕິ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ.

**ມາດຕາ 18 ສິດ ແລະ ໜ້າທີ່ກອງເລຂາກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍະກຳຂັ້ນເມືອງ**

ກອງເລຂາຊ່ວຍວຽກຂັ້ນເມືອງ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ເປັນເສນາທິການໃຫ້ແກ່ຫົວໜ້າຄະນະໃນການແຕ່ງຕັ້ງ, ຊັບຊ້ອນ, ຍົກຍ້າຍ, ປະຕິບັດນະໂຍບາຍ ແລະ ລົງວິໄນຕໍ່ນັກກິລາ, ບຸກຄະລາກອນກິລາ-ກາຍະກຳຢູ່ຂັ້ນເມືອງ;
2. ຈັດຕັ້ງປະຕິບັດ ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບການຄຸ້ມຄອງກອງທຶນຢູ່ຂັ້ນເມືອງ;
3. ຄົ້ນຄວ້າ, ວາງແຜນ ໂຄງການພັດທະນາວຽກງານກິລາ-ກາຍະກຳເພື່ອສະເໜີຕໍ່ຂັ້ນແຂວງອະນຸມັດແລ້ວຈັດຕັ້ງປະຕິບັດ;
4. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້າສະເໜີສ້າງຕັ້ງ ແລະ ປັບປຸງ ຫຼື ຍົກເລີກ ຜູ້ປະກອບການທຸລະກິດດ້ານກິລາຢູ່ຂັ້ນເມືອງ;
5. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຄັດເລືອກ, ຝຶກຊ້ອມນັກກິລາ ພ້ອມທັງຈັດການແຂ່ງຂັນ ແລະ ເຂົ້າຮ່ວມການແຂ່ງຂັນກິລາໃນລະດັບຕ່າງໆ ຢູ່ຂັ້ນເມືອງ;
6. ຄຸ້ມຄອງ, ພັດທະນາ, ນຳໃຊ້ພື້ນຖານໂຄງລ່າງ, ພາຫະນະ, ວັດຖຸອຸປະກອນ, ງົບປະມານກິລາ-ກາຍະກຳໃຫ້ມີປະສິດທິຜົນ;
7. ປຸກລະດົມຂົນຂວາຍຊອກຫາແຫຼ່ງທຶນເຂົ້າກອງທຶນ;
8. ສະຫຼຸບລາຍຮັບ-ລາຍຈ່າຍ ເງິນກອງທຶນ, ລາຍງານການເຄື່ອນໄຫວວຽກງານກອງທຶນເປັນປົກກະຕິ (6 ເດືອນຕົ້ນປີ ແລະ 6 ເດືອນທ້າຍປີ);
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ.

**ມາດຕາ 19 ກອງປະຊຸມຄະນະກຳມະການ ກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍະກຳ**

ຄະນະກຳມະການ ກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍະກຳແຂວງ ເປີດກອງປະຊຸມສະໄໝສາມັນປີລະໜຶ່ງຄັ້ງ, ຖ້າມີຄວາມຈຳເປັນ ຫຼື ວຽກຮີບດ່ວນກໍ່ສາມາດເປີດກອງປະຊຸມສະໄໝວິສາມັນເວລາໃດກໍ່ໄດ້, ກອງປະຊຸມຈະເປີດຂຶ້ນໄດ້ ກໍ່ຕໍ່ເມື່ອມີຄະນະກຳມະການກອງທຶນ ເຂົ້າຮ່ວມເກີນກວ່າເຄິ່ງໜຶ່ງຂອງຄະນະກຳມະການທັງໝົດ, ມະຕິກອງປະຊຸມ ໃຫ້ຖືເອົາສຽງສ່ວນຫຼາຍ, ກໍລະນີສຽງເທົ່າກັນ ແມ່ນໃຫ້ຖືເອົາ ຄຳເຫັນຂອງປະທານເປັນອັນຊີ້ຂາດ.

## ໝວດທີ 5

## ການກຳນົດລາງວັນ

**ມາດຕາ 20 (ປັບປຸງ) ລາງວັນຄູຝຶກ, ຜູ້ຊ່ວຍຄູຝຶກ ແລະ ນັກກິລາ ທີ່ເຂົ້າຮ່ວມແຂ່ງຂັນໃນລະດັບກິລາແຫ່ງຊາດ**

ນັກກິລາ ທີ່ໄດ້ຮັບການຄັດເລືອກ ແລະ ແຕ່ງຕັ້ງເຂົ້າຮ່ວມການແຂ່ງຂັນໃນງານມະຫາກຳກິລາແຫ່ງຊາດ ທີ່ໄດ້ຮັບຫຼຽນ-ລາງວັນຈະໄດ້ຮັບການຍ້ອງຍໍ ແລະ ເງິນລາງວັນດັ່ງນີ້:

**1. ປະເພດບຸກຄົນ:**

1) ຫຼຽນຄຳ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ ຈຳນວນ 5.000.000 ກີບຕໍ່ຫຼຽນ;
2) ຫຼຽນເງິນ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ ຈຳນວນ 4.000.000 ກີບຕໍ່ຫຼຽນ;
3) ຫຼຽນທອງ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ ຈຳນວນ 3.000.000 ກີບຕໍ່ຫຼຽນ.

- ຄູຝຶກ ຫຼື ຜູ້ຊ່ວຍຄູຝຶກ ຈະໄດ້ຮັບໃບຍ້ອງຍໍຂັ້ນແຂວງ ແລະ ເງິນລາງວັນ %50 ຂອງລາງວັນທີ່ນັກກິລາໄດ້ຮັບແຕ່ລະປະເພດ.

**2. ປະເພດຄູ່:**

1) ຫຼຽນຄຳ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ ຈຳນວນ 10.000.000 ກີບຕໍ່ຫຼຽນ;
2) ຫຼຽນເງິນ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ ຈຳນວນ 8.000.000 ກີບຕໍ່ຫຼຽນ;
3) ຫຼຽນທອງ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ ຈຳນວນ 6.000.000 ກີບຕໍ່ຫຼຽນ.

- ຄູຝຶກ ຫຼື ຜູ້ຊ່ວຍຄູຝຶກ ຈະໄດ້ຮັບໃບຍ້ອງຍໍຂັ້ນແຂວງ ແລະ ເງິນລາງວັນ %45 ຂອງລາງວັນທີ່ນັກກິລາໄດ້ຮັບແຕ່ລະປະເພດ.

**3. ປະເພດທີມທີ່ມີຈຳນວນ 10-3 ຄົນ:**

1) ຫຼຽນຄຳ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ ຈຳນວນ 20.000.000 ກີບຕໍ່ຫຼຽນ;
2) ຫຼຽນເງິນ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ ຈຳນວນ 16.000.000 ກີບຕໍ່ຫຼຽນ;
3) ຫຼຽນທອງ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ ຈຳນວນ 12.000.000 ກີບຕໍ່ຫຼຽນ.

- ຄູຝຶກ ຫຼື ຜູ້ຊ່ວຍຄູຝຶກ ຈະໄດ້ຮັບໃບຍ້ອງຍໍຂັ້ນແຂວງ ແລະ ເງິນລາງວັນ %35 ຂອງລາງວັນທີ່ນັກກິລາໄດ້ຮັບແຕ່ລະປະເພດ.

**4. ປະເພດທີມທີ່ມີຈຳນວນ 11 ຄົນຂຶ້ນໄປ:**

1) ຫຼຽນຄຳ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ ຈຳນວນ 40.000.000 ກີບຕໍ່ຫຼຽນ;
2) ຫຼຽນເງິນ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ ຈຳນວນ 32.000.000 ກີບຕໍ່ຫຼຽນ;
3) 3 (ຫຼຽນທອງ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ ຈຳນວນ 24.000.000 ກີບຕໍ່ຫຼຽນ.

- ຄູຝຶກ ຫຼື ຜູ້ຊ່ວຍຄູຝຶກ ຈະໄດ້ຮັບໃບຍ້ອງຍໍຂັ້ນແຂວງ ແລະ ເງິນລາງວັນ %25 ຂອງລາງວັນທີ່ນັກກິລາໄດ້ຮັບແຕ່ລະປະເພດ.

**ມາດຕາ 21 (ປັບປຸງ) ລາງວັນຄູຝຶກ, ຜູ້ຊ່ວຍຄູຝຶກ, ນັກກິລາ ທີ່ເຂົ້າຮ່ວມການແຂ່ງຂັນຕາມຄຳເຊີນ ຂອງບັນດາສະຫະພັນກິລາແຫ່ງຊາດ**

ນັກກິລາ ທີ່ໄດ້ຮັບການຄັດເລືອກ ແລະ ແຕ່ງຕັ້ງເຂົ້າຮ່ວມການແຂ່ງຂັນກິລາຕາມການເຊີນຂອງບັນດາສະຫະພັນກິລາແຫ່ງຊາດທີ່ໄດ້ຮັບຫຼຽນ-ລາງວັນປະເພດຕ່າງໆ ຈະໄດ້ຮັບການຍ້ອງຍໍ ແລະ ເງິນລາງວັນດັ່ງນີ້:

**1. ປະເພດບຸກຄົນ:**

1) ຫຼຽນຄຳ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ ຈຳນວນ 2.500.000 ກີບຕໍ່ຫຼຽນ;
2) ຫຼຽນເງິນ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ ຈຳນວນ 1.500.000 ກີບຕໍ່ຫຼຽນ;
3) ຫຼຽນທອງ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ ຈຳນວນ 1.000.000 ກີບຕໍ່ຫຼຽນ.

- ຄູຝຶກ ຫຼື ຜູ້ຊ່ວຍຄູຝຶກ ຈະໄດ້ຮັບໃບຍ້ອງຍໍຂັ້ນແຂວງ ແລະ ເງິນລາງວັນ 50% ຂອງລາງວັນທີ່ນັກກິລາໄດ້ຮັບແຕ່ລະປະເພດ.

**2. ປະເພດຄູ່:**

1) ຫຼຽນຄຳ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ ຈຳນວນ 5.000.000 ກີບຕໍ່ຫຼຽນ;
2) ຫຼຽນເງິນ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ ຈຳນວນ 3.000.000 ກີບຕໍ່ຫຼຽນ;
3) ຫຼຽນທອງ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ ຈຳນວນ 2.000.000 ກີບຕໍ່ຫຼຽນ.

- ຄູຝຶກ ຫຼື ຜູ້ຊ່ວຍຄູຝຶກ ຈະໄດ້ຮັບໃບຍ້ອງຍໍຂັ້ນແຂວງ ແລະ ເງິນລາງວັນ 45% ຂອງລາງວັນທີ່ນັກກິລາໄດ້ຮັບແຕ່ລະປະເພດ.

**3. ປະເພດທີມທີ່ມີຈຳນວນ 3-10 ຄົນ:**

1) ຫຼຽນຄຳ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ ຈຳນວນ 10.000.000 ກີບຕໍ່ຫຼຽນ;
2) ຫຼຽນເງິນ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ ຈຳນວນ 6.000.000 ກີບຕໍ່ຫຼຽນ;
3) ຫຼຽນທອງ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ ຈຳນວນ 4.000.000 ກີບຕໍ່ຫຼຽນ.

- ຄູຝຶກ ຫຼື ຜູ້ຊ່ວຍຄູຝຶກ ຈະໄດ້ຮັບໃບຍ້ອງຍໍຂັ້ນແຂວງ ແລະ ເງິນລາງວັນ 35% ຂອງລາງວັນທີ່ນັກກິລາໄດ້ຮັບແຕ່ລະປະເພດ.

**4. ປະເພດທີມທີ່ມີຈຳນວນ 11ຄົນຂຶ້ນໄປ:**

1) ຫຼຽນຄຳ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ ຈຳນວນ 20.000.000 ກີບຕໍ່ຫຼຽນ;
2) ຫຼຽນເງິນ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ ຈຳນວນ 12.000.000 ກີບຕໍ່ຫຼຽນ;
3) ຫຼຽນທອງ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ ຈຳນວນ 8.000.000 ກີບຕໍ່ຫຼຽນ.

- ຄູຝຶກ ຫຼື ຜູ້ຊ່ວຍຄູຝຶກ ຈະໄດ້ຮັບໃບຍ້ອງຍໍຂັ້ນແຂວງ ແລະ ເງິນລາງວັນ 25% ຂອງລາງວັນທີ່ນັກກິລາໄດ້ຮັບແຕ່ລະປະເພດ.

## ໝວດທີ 6
## ອົງການຄຸ້ມຄອງ, ຕິດຕາມ ແລະ ກວດກາ

### ມາດຕາ 22 (ສ້າງໃໝ່) ອົງການຄຸ້ມຄອງ

ອົງການຄຸ້ມຄອງກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍະກຳ ປະກອບດ້ວຍ:

1. ພະແນກສຶກສາທິການ ແລະ ກິລາແຂວງ;
2. ຫ້ອງການສຶກສາທິການ ແລະ ກິລາເມືອງ.

### ມາດຕາ 23 (ສ້າງໃໝ່) ສິດ ແລະ ໜ້າທີ່ຂອງພະແນກສຶກສາທິການ ແລະ ກິລາແຂວງ

ພະແນກສຶກສາທິການ ແລະ ກິລາແຂວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງ ແລະ ພັດທະນາວຽກງານກິລາ-ກາຍະກຳ;
2. ຄົ້ນຄວ້າ, ວາງແຜນການ, ໂຄງການພັດທະນາວຽກງານກິລາ-ກາຍະກຳ ພາຍໃນແຂວງ ເພື່ອສະເໜີຂັ້ນເທິງຂອງຕົນອະນຸຍາດ ແລ້ວຈັດຕັ້ງປະຕິບັດ;
3. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າສະເໜີສ້າງຕັ້ງ, ປັບປຸງ ຫຼື ຍຸບເລີກສະມາຄົມກິລາ-ກາຍະກຳ ເພື່ອໃຫ້ຂັ້ນເທິງພິຈາລະນາ;
4. ອະນຸຍາດສ້າງຕັ້ງ, ປັບປຸງ ຫຼື ຍຸບເລີກ ສະຫະພັນກິລາ, ສະໂມສອນກິລາ-ກາຍະກຳ ພາຍໃນແຂວງ;

5. ສະເໜີແຕ່ງຕັ້ງ, ຊັບຊ້ອນ, ຍົກຍ້າຍ, ປະຕິບັດນະໂຍບາຍ ແລະ ລົງວິໄນ ຕໍ່ພະນັກງານ-ລັດຖະກອນ, ບຸກຄະລາກອນ ແລະ ນັກກິລາ-ກາຍະກໍາທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຫຼື ສະເໜີຕໍ່ຂັ້ນເທິງພິຈາລະນາ;
6. ຊີ້ນໍາ, ແນະນໍາ, ເຜີຍແຜ່ ວິຊາການກິລາ-ກາຍະກໍາໃຫ້ແກ່ຫ້ອງການສຶກສາທິການ ແລະ ກິລາເມືອງ ຫຼື ພາກສ່ວນອື່ນທີ່ກ່ຽວຂ້ອງ;
7. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄັດເລືອກ, ຝຶກແອບ, ຝຶກຊ້ອມ, ທົດສອບ, ສ້າງ, ບໍາລຸງ ດ້ານວິຊາການໃຫ້ແກ່ນັກກິລາ, ບຸກຄະລາກອນກິລາ-ກາຍະກໍາ ພ້ອມທັງຈັດການແຂ່ງຂັນ ແລະ ເຂົ້າຮ່ວມການແຂ່ງຂັນໃນລະດັບຕ່າງໆ;
8. ຮຽກໂຮມປະຊຸມ ແລະ ເຂົ້າຮ່ວມປະຊຸມ ກ່ຽວກັບວຽກງານກິລາ-ກາຍະກໍາ ໃນທ້ອງຖິ່ນຂອງຕົນ;
9. ຄຸ້ມຄອງ, ພັດທະນາ, ນໍາໃຊ້ ພື້ນຖານໂຄງລ່າງ, ພາຫະນະ, ວັດຖຸອຸປະກອນ, ງົບປະມານຂອງວຽກງານກິລາ-ກາຍະກໍາໃຫ້ມີປະສິດທິຜົນ;
10. ສະເໜີສ້າງຕັ້ງ ໜ່ວຍງານຮັບຜິດຊອບຄຸ້ມຄອງສະໜາມກິລາ-ກາຍະກໍາ;
11. ລະດົມການສະໜັບສະໜູນທຶນຮອນຈາກສັງຄົມ ເພື່ອພັດທະນາວຽກງານກິລາ-ກາຍະກໍາ ໃນທ້ອງຖິ່ນຂອງຕົນ;
12. ພົວພັນຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານກິລາ-ກາຍະກໍາຕາມການມອບໝາຍຂອງຂັ້ນເທິງ;
13. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານກິລາ-ກາຍະກໍາ ໃຫ້ກະຊວງສຶກສາທິການ ແລະ ກິລາ ແລະ ອົງການປົກຄອງແຂວງ ຢ່າງເປັນປົກກະຕິ;
14. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 24 (ສ້າງໃໝ່) ສິດ ແລະ ໜ້າທີ່ຂອງຫ້ອງການສຶກສາທິການ ແລະ ກິລາເມືອງ**

ຫ້ອງການສຶກສາທິການ ແລະ ກິລາເມືອງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງ ແລະ ພັດທະນາວຽກງານກິລາ-ກາຍະກໍາ;
2. ຄົ້ນຄວ້າ, ວາງແຜນການ, ໂຄງການພັດທະນາວຽກງານກິລາ-ກາຍະກໍາ ເພື່ອສະເໜີຕໍ່ຂັ້ນເທິງຂອງຕົນອະນຸມັດແລ້ວຈັດຕັ້ງປະຕິບັດ;
3. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ ສະເໜີສ້າງຕັ້ງ, ປັບປຸງ ຫຼື ຍຸບເລີກສະໂມສອນກິລາ-ກາຍະກໍາ ເພື່ອໃຫ້ຂັ້ນເທິງພິຈາລະນາ;
4. ຮັບຮູ້ການສ້າງຕັ້ງ, ປັບປຸງ ຫຼື ຍຸບເລີກ ໜ່ວຍກິລາ-ກາຍະກໍາຮາກຖານ;
5. ສະເໜີແຕ່ງຕັ້ງ, ຊັບຊ້ອນ, ຍົກຍ້າຍ, ປະຕິບັດນະໂຍບາຍ ແລະ ລົງວິໄນ ຕໍ່ພະນັກງານ-ລັດຖະກອນ, ບຸກຄະລາກອນກິລາ-ກາຍະກໍາ ຕໍ່ຂັ້ນເທິງເພື່ອພິຈາລະນາ;
6. ຊີ້ນໍາ, ແນະນໍາ, ເຜີຍແຜ່ ວິຊາການກິລາ-ກາຍະກໍາ ໃຫ້ແກ່ສະໂມສອນ, ໜ່ວຍກິລາ-ກາຍະກໍາຮາກຖານ;
7. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການ ຄັດເລືອກ, ຝຶກແອບ, ຝຶກຊ້ອມ, ທົດສອບ, ສ້າງ, ບໍາລຸງ ດ້ານວິຊາການໃຫ້ແກ່ນັກກິລາ, ບຸກຄະລາກອນກິລາ-ກາຍະກໍາ ພ້ອມທັງຈັດການແຂ່ງຂັນ ແລະ ເຂົ້າຮ່ວມການແຂ່ງຂັນກິລາໃນລະດັບຕ່າງໆ;

8. ຮຽກໂຮມ ແລະ ເຂົ້າຮ່ວມປະຊຸມ ກ່ຽວກັບວຽກງານກິລາ-ກາຍະກຳ ໃນທ້ອງຖິ່ນຂອງຕົນ;
9. ຄຸ້ມຄອງ, ພັດທະນາ, ນຳໃຊ້ ພື້ນຖານໂຄງລ່າງ, ພາຫະນະ, ວັດຖຸປະກອນ, ງົບປະມານວຽກງານກິລາ-ກາຍະກຳໃຫ້ມີປະສິດທິຜົນ;
10. ລະດົມການສະໜັບສະໜູນທຶນຮອນຈາກສັງຄົມ ເພື່ອພັດທະນາວຽກງານກິລາ-ກາຍະກຳ;
11. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານກິລາ-ກາຍະກຳ ໃຫ້ພະແນກສຶກສາທິການ ແລະ ກິລາແຂວງ ແລະ ອົງການປົກຄອງເມືອງ ຢ່າງເປັນປົກກະຕິ;
12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 25 (ປັບປຸງ) ອົງການຕິດຕາມ ແລະ ກວດກາ**

ອົງການຕິດຕາມ ແລະ ກວດກາ ກອງທຶນປະກອບມີດັ່ງນີ້:

- **ກວດກາພາຍໃນ**
  1. ພະແນກສຶກສາທິການ ແລະ ກິລາແຂວງ;
  2. ຫ້ອງການສຶກສາທິການ ແລະ ກິລາເມືອງ.
- **ກວດກາພາຍນອກ**
  1. ສະພາປະຊາຊົນແຂວງ;
  2. ອົງການກວດກາລັດແຂວງ;
  3. ອົງການຈັດຕັ້ງມະຫາຊົນ, ອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ສື່ມວນຊົນ.

**ມາດຕາ 26 ການກວດກາກອງທຶນ**

ການກວດກາກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍະກຳມີດັ່ງນີ້:

1. ການປະຕິບັດແຜນການ, ໂຄງການ, ລະບຽບຂອງກອງທຶນ;
2. ການເຄື່ອນໄຫວ ຈັດຕັ້ງປະຕິບັດໜ້າທີ່ຄວາມຮັບຜິດຊອບຂອງພະນັກງານທີ່ກ່ຽວຂ້ອງ;
3. ການເກັບລາຍຮັບ, ການນຳໃຊ້ງົບປະມານຂອງກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍະກຳ.

**ມາດຕາ 27 ຮູບການກວດກາ**

ຮູບການກວດກາການນຳໃຊ້ກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍະກຳ ມີດັ່ງນີ້:

1. ກວດກາປົກກະຕິ ເປັນການກວດກາຕາມແຜນດຳເນີນງານ ແລະ ແຜນການປະຈຳປີ ເຊິ່ງກຳນົດເວລາອັນແນ່ນອນ;
2. ການກວດກາສະເພາະກິດ ແມ່ນການກວດກາເມື່ອເຫັນວ່າມີ ຄວາມຈຳເປັນ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຫຼື ບໍ່ໄດ້ແຈ້ງລ່ວງໜ້າໃຫ້ຜູ້ຖືກກວດກາຮັບຮູ້ກ່ອນ.

## ໝວດທີ 7
## ຂໍ້ຫ້າມ

**ມາດຕາ 28 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງມີພຶດຕິກຳດັ່ງນີ້:

1. ຂັດຂວາງ ຫຼື ປະຕິເສດການປະກອບສ່ວນເງິນເຂົ້າກອງທຶນໂດຍບໍ່ມີເຫດຜົນ;

2. ສວຍໃຊ້ໜ້າທີ່ຕຳແໜ່ງ, ໂຄສະນາຕົວະຍົວະຫຼອກລວງເພື່ອເອົາເງິນກອງທຶນໄປໃຊ້ຈ່າຍຫາຜົນປະໂຫຍດສ່ວນຕົວ, ຄອບຄົວ ແລະ ຍາດຕິພີ່ນ້ອງ;
3. ໃຫ້ ຫຼື ຮັບສິນບົນ;
4. ມີພຶດຕິກຳອື່ນໆ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 29 ຂໍ້ຫ້າມສຳລັບພະນັກງານ ທີ່ກ່ຽວຂ້ອງ**

1. ຫ້າມສວຍໃຊ້ໜ້າທີ່ຕຳແໜ່ງໂດຍບໍ່ຖືກຕ້ອງ, ນຳໃຊ້ເງິນກອງທຶນໂດຍບໍ່ໄດ້ຮັບອະນຸມັດຈາກຄະນະຮັບຜິດຊອບຄຸ້ມຄອງກອງທຶນ;
2. ນຳໃຊ້ເງິນກອງທຶນເພື່ອຜົນປະໂຫຍດສ່ວນຕົວ, ຄອບຄົວ, ໝູ່ເພື່ອນ ແລະ ຍາດຕິພີ່ນ້ອງ;
3. ໃຫ້ ຫຼື ຮັບສິນບົນ;
4. ອະນຸມັດ ຫຼື ນຳໃຊ້ເງິນກອງທຶນໂດຍບໍ່ຖືກຕ້ອງຕາມເປົ້າໝາຍທີ່ໄດ້ກຳນົດໄວ້;
5. ມີພຶດຕິກຳອື່ນໆ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 30 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ມີຜົນງານໃນການປະກອບສ່ວນເຂົ້າໃນການຈັດຕັ້ງ ປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ເກີດຜົນອັນສູງສົ່ງ ຕໍ່ວຽກງານກິລາ-ກາຍະກຳຂອງແຂວງ, ໄດ້ສ້າງກຽດຊື່ສຽງໃຫ້ແກ່ແຂວງຫຼວງນໍ້າທາຈະໄດ້ຮັບການຍ້ອງຍໍຕາມລະບຽບຫຼັກການ.

**ມາດຕາ 31 (ປັບປຸງ) ນະໂຍບາຍຕໍ່ຄະນະນຳ, ຄູຝຶກ ແລະ ນັກກິລາ ທີ່ໄດ້ຮັບບາດເຈັບ ຫຼື ເສຍຊີວິດ**

ຄະນະນຳ, ຄູຝຶກ ແລະ ນັກກິລາທີ່ໄດ້ຮັບບາດເຈັບ, ເສຍອົງຄະ ຫຼື ເສຍຊີວິດຍ້ອນການຝຶກຊ້ອມ, ເຂົ້າຮ່ວມການແຂ່ງຂັນກິລາຈະໄດ້ຮັບນະໂຍບາຍຕາມການຕົກລົງຂອງຄະນະຮັບຜິດຊອບກອງທຶນໂດຍອີງຕາມແຕ່ລະກໍລະນີ:

1. ເສຍຊີວິດຈະໄດ້ຮັບເງິນອຸດໜູນ 30.000.000 ກີບຕໍ່ຄົນ/ຄັ້ງ;
2. ໄດ້ຮັບບາດເຈັບ ຫຼື ເສຍອົງຄະ ຍ້ອນການຝຶກຊ້ອມ ແລະ ເຂົ້າຮ່ວມແຂ່ງຂັນກິລາຈະໄດ້ມີການຕີລາຄາປະເພດເສຍອົງຄະ ແລ້ວປະຕິບັດນະໂຍບາຍເທື່ອດຽວຕາມກົດໝາຍວ່າດ້ວຍການປະກັນສັງຄົມ.

**ມາດຕາ 32 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ຫາກລະເມີດຕໍ່ຂໍ້ຕົກລົງສະບັບນີ້ ຈະໄດ້ສຶກສາອົບຮົມ, ກ່າວເຕືອນ, ປະຕິບັດວິໄນ, ໃຊ້ແທນຄ່າເສຍຫາຍ ແລະ ດຳເນີນຄະດີຕາມກົດໝາຍ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 33 ການຈັດຕັ້ງປະຕິບັດ**

ມອບໃຫ້ພະແນກສຶກສາທິການ ແລະ ກິລາແຂວງ ເປັນເຈົ້າການໃນການ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ປະກົດຜົນເປັນຈິງ;

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງຂອງລັດ, ສັງຄົມຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 34 (ປັບປຸງ) ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ ເປັນຕົ້ນໄປ;

ຂໍ້ຕົກລົງສະບັບນີ້ ປ່ຽນແທນ ຂໍ້ຕົກລົງຂອງເຈົ້າແຂວງ ສະບັບເລກທີ 243/ຈຂ, ລົງວັນທີ 17 ພຶດສະພາ 2021 ວ່າດ້ວຍກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍະກຳ ແຂວງຫຼວງນ້ຳທາ;

ຂໍ້ກຳນົດ, ລະບຽບການໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແລ້ວແຕ່ຖືກຍົກເລີກ.

**ເຈົ້າແຂວງ**

ວຽງສະຫວັດ ສີພັນດອນ

**ບ່ອນນຳສົ່ງ:**

1. ທ່ານເຈົ້າແຂວງ, ຮອງເຈົ້າແຂວງ ທ່ານລະ 01 ສະບັບ.
2. ພະແນກສຶກສາທິການ ແລະ ກິລາແຂວງ 01 ສະບັບ.
3. ພາກສ່ວນທີ່ກ່ຽວຂ້ອງ ບ່ອນລະ 01 ສະບັບ.
4. ຂະແໜງຄົ້ນຄວ້າ-ສັງລວມ 01 ສະບັບ.
5. ສຳເນົາ 02 ສະບັບ .